# ເອກະສານປາຖະກະຖາ
# ວັນເກີດປະທານ ໄກສອນ ພົມວິຫານ ຄົບຮອບ 101 ປີ
# (13 ທັນວາ 1920 - 13 ທັນວາ 2021)

ປະທານ ໄກສອນ ພົມວິຫານ ແມ່ນນັກຮັກຊາດຜູ້ຍິ່ງໃຫຍ່, ແມ່ນລູກຜູ້ປະເສີດຂອງປະຊາຊົນລາວບັນດາເຜົ່າ, ແມ່ນນັກປະຕິວັດຜູ້ດີເລີດ, ເພິ່ນເປັນຜູ້ນໍາສູງສຸດຂອງການປະຕິວັດລາວ ທີ່ມີຄວາມປີຊາສາມາດ, ມີຄວາມສະຫຼາດຫຼັກແຫຼມ, ມີໄຫວພິບອັນແຫຼມຄົມ ແລະ ມີນໍ້າໃຈຕໍ່ສູ້ເດັດດ່ຽວໝຽວແໜ້ນ, ເປັນຜູ້ນໍາທີ່ແສນເຄົາລົບຮັກຂອງ ພັກ, ລັດ ແລະ ປະຊາຊົນ ແລະ ເປັນວິລະບູລຸດຂອງຊາດລາວເຮົາ.

## I. ຊີວິດ ແລະ ການເຄື່ອນໄຫວປະຕິວັດຂອງປະທານໄກສອນ ພົມວິຫານ.

ປະທານ ໄກສອນ ພົມວິຫານ ເກີດໃນວັນທີ 13 ທັນວາ 1920 ທີ່ບ້ານນາເຊງ, ເມືອງຄັນທະບູລີ, ແຂວງສະຫວັນນະເຂດ ໃນຄອບຄົວທີ່ພໍ່ເປັນຂ້າລາຊະການ ແລະ ແມ່ເປັນຊາວນາ ທີ່ຍຶດໝັ້ນໃນຫຼັກທໍາຄໍາສອນຂອງພຸດທະສາສະໜາ ແລະ ຮີດຄອງປະເພນີລາວ.

ປະທານ ໄກສອນ ພົມວິຫານ ເປັນລູກຊາຍກົກຂອງຄອບຄົວ, ມີນ້ອງສາວສອງຄົນຄື: ນາງສະຫວັນທອງ ແລະ ນາງກອງມະນີ.

ຊີວິດເມື່ອເຍົາໄວຂອງປະທານໄກສອນ ພົມວິຫານ ແມ່ນຊີວິດອັນອົບອຸ່ນດ້ວຍຄວາມຮັກ ແລະ ຄວາມເອົາໃຈໃສ່ຂອງພໍ່ແມ່, ເພິ່ນໄດ້ຮັບການລ້ຽງດູ ແລະ ການອົບຮົມສັ່ງສອນຈາກພໍ່ແມ່ໃຫ້ເປັນເດັກດີມີວິໄນ ແລະ ໃຝ່ຫາການສຶກສາ, ເມື່ອອາຍຸ 7 ປີ ເພິ່ນໄດ້ເຂົ້າຮຽນຊັ້ນປະຖົມພາສາລາວຕໍ່ມາເປັນພາສາຝຣັ່ງ, ເພິ່ນໄດ້ຕັ້ງໃຈຮຽນ, ດຸໝັ່ນອ່ານໜັງສື, ເຄົາລົບຄູ, ຮັກແພງໝູ່ຄູ່ ແລະ ຮຽນໄດ້ຄະແນນດີ. ພາຍຫຼັງຮຽນຈົບຊັ້ນປະຖົມພາສາຝຣັ່ງ ທີ່ແຂວງສະຫວັນນະເຂດ ເພິ່ນໄດ້ໄປຮຽນຕໍ່ທີ່ວິທະຍາໄລໂປຣເຕັກໂຕຣາ (ອາລັກຂາ) ທີ່ຮ່າໂນ້ຍປະເທດຫວຽດນາມ.

ໃນຊຸມປີ 1936 - 1939 ຢູ່ນະຄອນຮ່າໂນ້ຍ ໄດ້ມີຂະບວນການຕໍ່ສູ້ຮຽກຮ້ອງເອົາສິດເສລີພາບ ແລະ ປະຊາທິປະໄຕ; ປະທານໄກສອນ ພົມວິຫານ ກໍໄດ້ເຂົ້າຮ່ວມຂະບວນການດັ່ງກ່າວນັ້ນ. ເພິ່ນມັກຮຽນ ແລະ ມັກຊອກຮຽນຮູ້ສິ່ງໃໝ່ໆ ໂດຍສະເພາະແມ່ນເພິ່ນມັກອ່ານໜັງສືພິມ "ເລີຕຣາວາຍ" (ແຮງງານ) ເຊິ່ງເປັນກະບອກສຽງຂອງພັກກອມມູນິດອິນດູຈີນ, ພ້ອມກັນນັ້ນ ເພິ່ນຍັງໄດ້ຮຽນມວຍຫວຽດນາມ, ມວຍຈີນ, ມວຍຢູໂດ ເພື່ອປ້ອງກັນຕົວ.

ປີ 1943 ເພິ່ນໄດ້ຮຽນຈົບອຸດົມສຶກສາພາສາຝຣັ່ງ, ຫຼັງຈາກນັ້ນ, ເພິ່ນກໍ່ໄດ້ເຂົ້າຮຽນຕໍ່ທີ່ມະຫາວິທະຍາໄລ ໃນຂະແໜງກົດໝາຍທີ່ຮ່າໂນ້ຍ, ເພິ່ນເປັນຜູ້ໜຶ່ງໃນຈໍານວນຄົນທີ່ຮຽນເກັ່ງ ແລະ ມີພອນສະຫວັນທາງດ້ານນີ້.

ປີ 1944 ເພິ່ນໄດ້ເຂົ້າຮ່ວມເປັນສະມາຊິກ ສະມາຄົມຊາວໜຸ່ມກູ້ຊາດຫວຽດນາມ ເຊິ່ງເປັນບາດກ້າວທໍາອິດຂອງການເຂົ້າສູ່ເສັ້ນທາງເຄື່ອນໄຫວປະຕິວັດ, ເພິ່ນໄດ້ປະກອບສ່ວນຢ່າງຫ້າວຫັນ ໃນຂະບວນການ ຫວຽດມິນ, ຕໍ່ມາໄດ້ເຂົ້າຮ່ວມໃນຂະບວນການຍຶດອໍານາດ ການປົກຄອງຈາກກໍາມືຂອງພວກຍີ່ປຸ່ນ ຢູ່ແຂວງສະຫວັນນະເຂດ ໃນວັນທີ 23 ສິງຫາ 1945.

ເດືອນມີນາ - ເດືອນທັນວາ 1946 ປະທານໄກສອນ ພົມວິຫານ ໄດ້ເຂົ້າຮ່ວມເຮັດວຽກໃນຄະນະຕິດຕໍ່ ລາວ - ຫວຽດນາມ.

ປີ 1947 - 1948 ປະທານ ໄກສອນ ພົມວິຫານ ໄດ້ເລີ່ມຊີວິດຂອງນັກປະຕິວັດໜຸ່ມ, ເພິ່ນໄດ້ເຮັດວຽກ ຢູ່ໃນອົງການໂຄສະນາຂອງເຂດ 12 ພາກເໜືອຫວຽດນາມ, ໄດ້ຄົ້ນຄວ້າເອກະສານ, ບົດຄວາມເຫັນ, ບົດຂຽນຕ່າງໆຂອງບັນດາຜູ້ນໍາການປະຕິວັດຫວຽດນາມ ເປັນຕົ້ນ ແມ່ນຂອງປະທານໂຮ່ຈີມິນ, ທ່ານ

ເຈືອງຈິງ, ທ່ານ ຟາມວັນດົງ, ທ່ານ ຫວໍຫາງວຽນຢາບ ແລະ ໄດ້ອ່ານປຶ້ມກ່ຽວກັບລັດທິມາກ-ເລນິນ, ບົດນິພົນທິດສະດີປະຕິວັດອື່ນໆ ຊຶ່ງໄດ້ກາຍເປັນພື້ນຖານທາງດ້ານແນວຄິດ, ເປັນອາວຸດອັນແຫຼມຄົມ ທາງດ້ານສະຕິປັນຍາ ເພື່ອກ້າວສູ່ຄວາມເປັນຜູ້ນໍາຂະບວນການຕໍ່ສູ້ຂອງປະຊາຊົນເຮົາ ໃນເວລາຕໍ່ມາ.

ວັນທີ 27 ກຸມພາ 1948 ສູນກາງພັກກອມມູນິດອິນດູຈີນ ໄດ້ຕົກລົງສ້າງຕັ້ງກອງຕະລຸມບອນເຂດລາວເໜືອ ແລະ ປະທານໄກສອນ ພົມວິຫານ ໄດ້ຖືກມອບໝາຍໃຫ້ເປັນຫົວໜ້າ ກອງຕະລຸມບອນ ເຮັດໜ້າທີ່ກໍ່ສ້າງຮາກຖານການເມືອງ, ຈັດຕັ້ງກອງກໍາລັງປະກອບອາວຸດ, ສ້າງຖານທີ່ໝັ້ນທໍາອິດຂອງການປະຕິວັດຢູ່ເຂດຕາເວັນອອກສ່ຽງເໜືອຂອງລາວ ໂດຍເອົາບໍລິເວນລາວຮຸ່ງ, ພຽງສາ, ມອງນໍ້າ, ຜາຫຼວງຂອງເມືອງຊຽງຄໍ້, ແຂວງຫົວພັນ ເປັນໃຈກາງເຄື່ອນໄຫວປະຕິວັດ ສ້າງຮາກຖານປະຊາຊົນ, ສ້າງອໍານາດການປົກຄອງໃໝ່, ທັງສູ້ຮົບທັງຂົນຂວາຍທະຫານສັດຕູທັງຈັດຕັ້ງທະຫານລາດກອງຫຼອນ ແລະ ຕ້ານການກວາດລ້າງຂອງສັດຕູ.

ຍ້ອນໄດ້ຜ່ານການຝຶກຝົນທົດສອບຢ່າງລະອຽດລະອໍ້ຽວໃນຂະບວນການປະຕິວັດ, ໃນວັນທີ 6 ມັງກອນ 1949 ປະທານ ໄກສອນ ພົມວິຫານ ໄດ້ສະໝັກເຂົ້າເປັນສະມາຊິກພັກກອມມູນິດອິນດູຈີນ ແລະ ໃນວັນທີ 28 ກໍລະກົດ 1949 ໄດ້ຖືກຮັບເປັນສະມາຊິກສົມບູນຂອງພັກ. ຕັ້ງແຕ່ນັ້ນມາ ປະທານ ໄກສອນ ພົມວິຫານ ໄດ້ກ້າວເດີນບົນເສັ້ນທາງ ອັນສະຫວ່າງສະໄຫວຂອງການປະຕິວັດຕາມລັດທິມາກ-ເລນິນ ດ້ວຍຄວາມເຊື່ອໝັ້ນ ອັນໜັກແໜ້ນ ແລະ ດ້ວຍມານະຈິດອັນແນ່ວແນ່ ໂດຍບໍ່ຫວັ່ນໄຫວຄອນແຄນຕໍ່ສິ່ງທ້າທາຍທົດສອບໃດໆ ແລະ ບໍ່ທໍ້ຖອຍຍອມຈໍານົນຕໍ່ຄວາມຫຍຸ້ງຍາກ ແລະ ໄພຂົ່ມຂູ່ໃດໆທັງສິ້ນ.

ວັນທີ 20 ມັງກອນ 1949 ປະທານ ໄກສອນ ພົມວິຫານ ໄດ້ປະກາດສ້າງຕັ້ງກອງທັບລາວອິດສະຫຼະ ແລະ ເພິ່ນໄດ້ຖືກແຕ່ງຕັ້ງ ເປັນຜູ້ບັນຊາການກອງທັບລາວອິດສະຫຼະ ເຊິ່ງເປັນກໍາລັງປະກອບອາວຸດປະຕິວັດທີ່ຢູ່ພາຍໃຕ້ການນໍາ ພາໂດຍກົງ ແລະ ຮອບດ້ານຂອງພັກ.

ເດືອນສິງຫາ 1950 ໃນກອງປະຊຸມໃຫຍ່ແນວລາວອິດສະຫຼະທົ່ວປະເທດ ປະທານ ໄກສອນ ພົມວິຫານ ໄດ້ຮັບເລືອກຕັ້ງເປັນກໍາມະການໃນຄະນະກໍາມະການສູນກາງແນວລາວອິດສະຫຼະ ແລະ ເປັນລັດຖະມົນຕີວ່າການກະຊວງ ປ້ອງກັນຊາດຂອງລັດຖະບານລາວຕໍ່ຕ້ານ.

ເດືອນ ກຸມພາ 1951 ໃນກອງປະຊຸມໃຫຍ່ ຄັ້ງທີ II ຂອງພັກກອມມູນິດອິນດູຈີນ ທີ່ຫວຽດນາມ, ປະທານ ໄກສອນ ພົມວິຫານ ໄດ້ຮັບເລືອກຕັ້ງໃຫ້ໄປຮ່ວມ ແລະ ກອງປະຊຸມ ໄດ້ ມີມະຕິຕົກລົງໃຫ້ຈັດຕັ້ງພັກການເມືອງຂອງແຕ່ລະປະເທດໃນອິນດູຈີນ (ຫວຽດນາມ, ລາວ ແລະ ຂະແມ); ປະທານໄກສອນ ພົມວິຫານ ໄດ້ຮັບມອບໝາຍ ຈາກກອງປະຊຸມໃຫ້ກະກຽມດ້ານຕ່າງໆໃຫ້ແກ່ການສ້າງຕັ້ງພັກປະຊາຊົນລາວ.

ໃນຊຸມປີ 1952, 1953, 1954 ປະທານ ໄກສອນ ພົມວິຫານ ໃນຖານະເປັນລັດຖະມົນຕີວ່າການກະຊວງປ້ອງກັນປະເທດ ແລະ ເປັນຜູ້ບັນຊາການກອງທັບ, ປະທານໄກສອນ ພົມວິຫານ ໄດ້ສຸມກໍາລັງກາຍ, ກໍາລັງໃຈຕໍ່ກັບວຽກງານທີ່ສໍາຄັນເປັນຕົ້ນ ແມ່ນການກໍ່ສ້າງ ແລະ ຂະຫຍາຍກໍາລັງປະກອບອາວຸດ, ປຸກລະດົມຂະບວນການສົງຄາມກອງຫຼອນຕ້ານການກວາດລ້າງ, ປັບປຸງ ແລະ ຂະຫຍາຍຖານທີ່ໝັ້ນການປະຕິວັດ, ຊີ້ນໍາບັນດາຂັ້ນຮົບໂຈມຕີຕ່າງໆລວມທັງບັ້ນຮົບບຸກໂຈມຕີແນວປ້ອງກັນນໍ້າອູຂອງສັດຕູ, ປະກອບສ່ວນເຂົ້າໃນໄຊຊະນະດຽນບຽນຟູຂອງຫວຽດນາມ, ພ້ອມກັນນັ້ນ ກໍກະກຽມທຸກດ້ານໃຫ້ແກ່ການສ້າງຕັ້ງພັກປະຕິວັດເພື່ອນໍາພາການປະຕິວັດລາວ.

ໃນວັນທີ 22 ມີນາ 1955 ກອງປະຊຸມສ້າງຕັ້ງພັກ ໄດ້ໄຂຂຶ້ນ ແລະ ດໍາເນີນໄປຮອດວັນທີ 6 ເມສາ 1955, ປະທານ ໄກສອນ ພົມວິຫານ ໄດ້ຮັບເລືອກຕັ້ງໃຫ້ເປັນເລຂາທິການ ຄະນະຊີ້ນໍາສູນກາງພັກປະຊາຊົນລາວ ທັງເປັນເລຂາທິການຄະນະພັກທະຫານສູນກາງ ແລະ ທັງເປັນຜູ້ບັນຊາການສູງສຸດບັນດາກໍາລັງປະກອບອາວຸດ.

ປີ 1955 ປະທານ ໄກສອນ ພົມວິຫານ ໄດ້ຊີ້ນໍາ-ນໍາພາບັ້ນຮົບ ບຸກໂຈມຕີຂອງສັດຕູເຂົ້າສອງແຂວງເຕົ້າໂຮມໄດ້ປຸກລະດົມກໍາລັງປະກອບອາວຸດ ແລະ ປະຊາຊົນສອງແຂວງຕໍ່ຕ້ານ ຢ່າງພິລະອາດຫານ ເຮັດໃຫ້

ພວກເຂົາຖືກປະລາໄຊ, ພວກເຮົາສາມາດປົກປັກຮັກສາສອງແຂວງເຕົ້າໂຮມໄວ້ ຢ່າງໝັ້ນຄົງເຂັ້ມແຂງ ແລະ ຂະຫຍາຍກຳລັງປະຕິວັດອອກຢ່າງກວ້າງຂວາງ.

ຕົ້ນເດືອນ ມັງກອນ 1956 ກອງປະຊຸມໃຫຍ່ສ້າງຕັ້ງແນວລາວຮັກຊາດ ໄດ້ໄຂຂຶ້ນທີ່ເມືອງວຽງໄຊ, ແຂວງຫົວພັນ ໃນກອງປະຊຸມໃຫຍ່ຄັ້ງນີ້ ປະທານໄກສອນ ພົມວິຫານ ໄດ້ຮັບເລືອກຕັ້ງເປັນຮອງປະທານຄະນະກຳມະການສູນກາງແນວລາວຮັກຊາດ.

ປີ 1957-1958 ປະທານ ໄກສອນ ພົມວິຫານ ໄດ້ຊີ້ນຳການຕໍ່ສູ້ທາງດ້ານການທະຫານ ແລະການເມືອງ ໄດ້ຜ່ອນສັ້ນຜ່ອນຍາວກັບຝ່າຍກົງກັນຂ້າມຢ່າງມີໄຫວພິບ ເພື່ອໃຫ້ໄດ້ເຊັນສັນຍາວຽງຈັນໂດຍໃຫ້ເຫດຜົນວ່າ “ຖອຍບາດກ້າວໜຶ່ງ ເພື່ອກະໂດດສອງບາດກ້າວຕາມຫຼັງ” ເຊິ່ງເຮັດໃຫ້ຝ່າຍລາຊາອະນາຈັກຕ້ອງຍອມເຈລະຈາ ລວມລາວຄັ້ງທີ່ໜຶ່ງ ແລະ ສ້າງຕັ້ງລັດຖະບານປະສົມສອງຝ່າຍຂຶ້ນ ໃນວັນທີ 19 ພະຈິກ 1957; ພ້ອມກັນນັ້ນເພິ່ນໄດ້ເຫັນພ້ອມໃຫ້ມີການເລືອກຕັ້ງເພີ່ມເຕີມແທນການທວງໃຫ້ຍຸບສະພາຂອງຝ່າຍວຽງຈັນ, ຊຶ່ງເວລານັ້ນ ປະທານໄກສອນ ພົມວິຫານ ເອງກໍໄດ້ລົງສະໝັກຮັບເລືອກຕັ້ງທີ່ແຂວງອັດຕະປື, ແຕ່ເພິ່ນບໍ່ໄດ້ຖືກເລືອກຕັ້ງຍ້ອນຖືກຝ່າຍກົງກັນຂ້າມໂກງດ້ວຍການຈົກບັດ ທີ່ປະຊາຊົນປ້ອນເອົາເພິ່ນນັ້ນອອກຈາກຫີບບັດແລ້ວເອົາຂອງຕົນເຂົ້າໃສ່ແທນ.

ປີ 1959 - 1962 ປະທານ ໄກສອນ ພົມວິຫານ ໄດ້ນຳພາ-ຊີ້ນຳການຫັນທິດການຕໍ່ສູ້, ເຊິ່ງໄດ້ມີຫົວຄິດປະດິດສ້າງໃນການໝູນໃຊ້ຮູບການ ແລະ ວິທີການຕໍ່ສູ້ຢ່າງຖືກຕ້ອງສອດຄ່ອງກັບສະພາບຄວາມເປັນຈິງຂອງປະເທດເຮົາ; ຊີ້ນຳກອງພັນທີສອງປະເທດລາວຕີຜ່າວົງປິດລ້ອມຂອງສັດຕູ, ຊີ້ນຳໂດຍກົງກ່ຽວກັບແຜນການເອົາບັນດາຜູ້ນຳແນວລາວຮັກຊາດ ໂຕນອອກຈາກຄຸກໂພນເຄັງກັບຄືນຖານທີ່ໝັ້ນການປະຕິວັດດ້ວຍຄວາມປອດໄພ; ໄດ້ຊີ້ນຳ-ນຳພາການປັບປຸງ ແລະ ກໍ່ສ້າງກຳລັງປະກອບອາວຸດ, ສ້າງພື້ນຖານການປະຕິວັດ; ຊີ້ນຳບັ້ນຮົບປົດປ່ອຍທົ່ງໄຫຫີນ ຊຽງຂວາງ ແລະ ບັ້ນຮົບປົດປ່ອຍຫຼວງນ້ຳທາ ຈາກໄຊຊະນະຂອງບັ້ນຮົບດັ່ງກ່າວນັ້ນ ໄດ້ບັງຄັບໃຫ້ຝ່າຍກົງກັນຂ້າມຕ້ອງຍອມເຈລະຈາລົງນາມໃນສັນຍາທົ່ງໄຫຫີນ ສ້າງຕັ້ງລັດຖະບານປະສົມ 3 ຝ່າຍ ໃນວັນທີ 12 ມິຖຸນາ 1962.

ປີ 1963-1964 ເປັນປີທີ່ຫຍຸ້ງຍາກສັບສົນ, ສັດຕູ ໄດ້ເພີ່ມທະວີການມ້າງເພລັດຖະບານປະສົມ ແລະ ບຸກຕີຍຶດເອົາຈຸດທີ່ຕັ້ງທີ່ສຳຄັນຂອງການປະຕິວັດ, ປະທານໄກສອນ ພົມວິຫານ ໄດ້ຊີ້ນຳກອງປະຊຸມສູນກາງພັກ ໄດ້ກຳນົດທິດສະເພາະໜ້າຂອງການປະຕິວັດ ຕ້ອງຕໍ່ສູ້ປົກປັກຮັກສາລັດຖະບານປະສົມ, ຕໍ່ສູ້ໃຫ້ປະຕິບັດສັນຍາເຊີແນວ, ເຊີດຊູຄັນທຸງຊາດ ປະຊາທິປະໄຕ, ສັນຕິພາບ, ເປັນກາງ, ອອກແຮງປັບປຸງກຳລັງປະຕິວັດໃນທຸກດ້ານ ເພື່ອຮັບປະກັນການປະຕິບັດໜ້າທີ່ສະເພາະໜ້າຂອງການປະຕິວັດ.

ກອງປະຊຸມໃຫຍ່ ຄັ້ງທີ II ຂອງແນວລາວຮັກຊາດ (1964) ປະທານ ໄກສອນ ພົມວິຫານ ຮັບເລືອກຕັ້ງ ໃຫ້ເປັນຮອງປະທານສູນກາງແນວລາວຮັດຊາດ.

ປີ 1965 - 1968 ປະທານໄກສອນ ພົມວິຫານ ໄດ້ຊີ້ນຳການກາຈັດຕັ້ງປະຕິບັດແຜນນະໂຍບາຍກໍ່ສ້າງເຂດປົດປ່ອຍໃຫ້ເປັນຄືລັດໜຶ່ງ ເພື່ອເປັນຖານທີ່ໝັ້ນການປະຕິວັດໃນທົ່ວປະເທດ ແລະ ກາຍເປັນບ່ອນອີງອັນແໜ້ນແກ່ນໃຫ້ແກ່ການຕໍ່ສູ້ຂອງປະຊາຊົນ ໃນເຂດກວດກາຊົ່ວຄາວຂອງສັດຕູ; ຊີ້ນຳການຈັດຕັ້ງປະຕິບັດມະຕິສູນກາງພັກ ຄັ້ງທີ 15 ກ່ຽວກັບວຽກງານເສດຖະກິດ-ການເງິນຂອງເຂດປົດປ່ອຍ; ຊີ້ນຳວຽກງານກໍ່ສ້າງພັກ ແລະ ປັບປຸງພັກໃຫ້ເຂັ້ມແຂງຮອບດ້ານ; ຊີ້ນຳກໍ່ສ້າງຮາກຖານ ໄດ້ລະດົມຊາວໜຸ່ມເຂົ້າຮ່ວມທຸກວຽກງານ ແລະ ປຸກລະດົມປະຊາຊົນຍິງຍົນສັດຕູທີ່ມາຍິງທຳລາຍເຂດປົດປ່ອຍ; ຊີ້ນຳບັ້ນຮົບປົດປ່ອຍນ້ຳບາກ, ບັ້ນຮົບປົດປ່ອຍຜາຖີ່ຢູ່ແຂວງຫົວພັນ ດັບສູນກອງບັນຊາການຂອງກອງປຸ້ນ ແລະ ທຳລາຍສະຖານີຣາດາໃຫຍ່ຂອງອາເມລິການຢູ່ພາກເໜືອລາວ.

ປີ 1969 - 1973 ປະທານໄກສອນ ພົມວິຫານ ຊີ້ນຳການທັບມ້າງແຜນການຍຸດທະສາດປືນຂັ້ນໄດສົງຄາມພິເສດເພີ່ມທະວີຢູ່ລາວຂອງອາເມລິກາ; ຊີ້ນຳການຕໍ່ສູ້ຮົບປົກປັກຮັກສາເຂດປົດປ່ອຍ ປ້ອງກັນສາຍ

ທາງຍຸດທະສາດແຕ່ພາກກາງຮອດພາກໃຕ້, ຊຸກຍູ້ການເຄື່ອນໄຫວຢູ່ແນວຫຼັງສັດຕູ; ຊີ້ນຳການບຸກໂຈມຕີຍາດເອົາບໍລິເວນທົ່ງໄຫຫີນຄືນມາ ແລະ ຕີຕ້ານບັ້ນຮົບເຄື່ອນທັບ "ກູ້ກຽດ" ຂອງສັດຕູໃຫ້ປະລາໄຊລົງ; ຊີ້ນຳບັ້ນຮົບລາມເຊີນ 719 ທາງເລກ 9 ເຊິ່ງໄດ້ຮັບໄຊຊະນະຢ່າງໃຫຍ່ຫຼວງ; ຊີ້ນຳການຕໍ່ສູ້ທາງດ້ານການເມືອງທວງໃຫ້ຢຸດຕິການຖິ້ມລະເບີດຍິງທຳລາຍເຂດປົດປ່ອຍ, ໃຫ້ສອງຝ່າຍຕ້ອງຢຸດຍິງກັນກັບທີ່ ແລະ ເປີດການເຈລະຈາຟື້ນຟູສັນຕິພາບ, ປະຕິບັດຄວາມຖືກຕ້ອງປອງດອງຊາດ, ໃນວັນທີ 21 ກຸມພາ 1973 ສັນຍາວຽງຈັນໄດ້ຮັບການລົງນາມ, ປະທານ ໄກສອນ ພົມວິຫານ ໄດ້ຕີລາຄາກ່ຽວກັບສັນຍາວຽງຈັນວ່າ: ເປັນໄຊຊະນະອັນໃຫຍ່ຫຼວງຮອບດ້ານ, ເປັນພື້ນຖານແຕ່ກໍຕ້ອງກ້າວໄປຕື່ມອີກຈຶ່ງຈະໄປເຖິງໄຊຊະນະສົມບູນ.

ປີ 1974 - 1975 ປະທານ ໄກສອນ ພົມວິຫານ ໄດ້ຊີ້ນຳການເສີມຂະຫຍາຍກຳລັງແຮງສັງລວມ ແລະ ທ່າສະໜາມສາມເຂດ (ເຂດປົດປ່ອຍ, ເຂດຄວບຄຸມຂອງສັດຕູ ແລະ ເຂດເປັນກາງ), ພ້ອມກັນນັ້ນເພິ່ນຍັງໄດ້ຊີ້ນຳການຈັດຕັ້ງຝຶກອົບຮົມ ໃຫ້ແກ່ພະນັກງານຫຼັກແຫຼ່ງ ເພື່ອກະກຽມໃຫ້ແກ່ການລຸກຮື້ຍຶດອຳນາດການປົກຄອງໃນຂອບເຂດທົ່ວປະເທດ; ເພິ່ນໄດ້ລົງຊີ້ນຳ-ນຳພາໂດຍກົງ ການຈັດຕັ້ງຕໍ່ສູ້ຂອງປະຊາຊົນ ເລີ່ມຈາກການທວງເອົາສິດເສລີພາບ, ຄວາມເປັນທຳກ້າວໄປເຖິງການຕໍ່ສູ້ຍາດເອົາອຳນາດການປົກຄອງມາມີປະຊາຊົນເປັນແຕ່ລະພາກສ່ວນ; ຊີ້ນຳຂະບວນການລຸກຮື້ຂອງປະຊາຊົນ ໃນການໂຄ່ນລົ້ມອຳນາດການປົກຄອງເກົ່າ, ສ້າງຕັ້ງອຳນາດການປົກຄອງປະຕິວັດຂຶ້ນໃນຂອບເຂດທົ່ວປະເທດ ດ້ວຍ 3 ບາດຄ້ອນຍຸດທະສາດ, ສົມທົບກັບການຕໍ່ສູ້ດ້ານກົດໝາຍ ເພື່ອຍາດເອົາໄຊຊະນະຂັ້ນພື້ນຖານ ໃນໄລຍະສັ້ນໂດຍບໍ່ມີການນອງເລືອດ.

ວັນທີ 01-02 ທັນວາ 1975 ໃນກອງປະຊຸມໃຫຍ່ຜູ້ແທນປະຊາຊົນທົ່ວປະເທດ ໄດ້ປະກາດລົບລ້າງລະບອບລາຊາທິປະໄຕ ແລະ ສະຖາປະນາ ສປປ ລາວ, ປະທານໄກສອນ ພົມວິຫານ ໄດ້ຮັບເລືອກຕັ້ງເປັນປະທານສະພາລັດຖະມົນຕີແຫ່ງ ສປປ ລາວ.

ປີ 1976 ພາຍຫຼັງປະເທດຊາດໄດ້ຮັບການປົດປ່ອຍໂດຍສົມບູນ ປະທານ ໄກສອນ ພົມວິຫານ ໄດ້ຊີ້ນຳການປະຕິວັດສາມປະການຄື: ການປະຕິວັດການພົວພັນການຜະລິດ, ການປະຕິວັດວິທະຍາສາດ - ເຕັກນິກ ແລະ ການປະຕິວັດດ້ານແນວຄິດ ແລະ ວັດທະນະທຳ, ຊີ້ນຳການຟື້ນຟູເສດຖະກິດແຫ່ງຊາດ.

ປີ 1979 ໃນກອງປະຊຸມສູນກາງພັກຄັ້ງທີ 7 ສະໄໝທີ II ປະທານ ໄກສອນ ພົມວິຫານ ໄດ້ສະເໜີຕໍ່ພັກກ່ຽວກັບແນວທາງຫັນເສດຖະກິດທຳມະຊາດ ແລະ ເຄິ່ງເສດຖະກິດທຳມະຊາດໄປສູ່ເສດຖະກິດສິນຄ້າໂດຍຜ່ານການນຳໃຊ້ຮູບການ " ທຶນນິຍົມແຫ່ງລັດ ", ເລີ່ມຕົ້ນມີແນວຄິດລິເລີ່ມ ແລະ ຊອກຫາແນວທາງປ່ຽນແປງໃໝ່.

ນັບແຕ່ກອງປະຊຸມໃຫຍ່ຄັ້ງທີ I-V ຂອງພັກ, ປະທານ ໄກສອນ ພົມວິຫານ ໄດ້ຮັບເລືອກຕັ້ງເປັນເລຂາທິ ການໃຫຍ່ຄະນະບໍລິຫານງານສູນກາງພັກ ຈົນຕະຫລອດຊີວິດຂອງເພິ່ນ ແລະ ໃນເດືອນສິງຫາ ປີ 1991 ເພິ່ນໄດ້ຮັບເລືອກຕັ້ງເປັນປະທານປະເທດ ແຫ່ງ ສປປ ລາວ.

## II. ຜົນງານ ແລະ ຄຸນງາມຄວາມດີຂອງປະທານໄກສອນ ພົມວິຫານ.

### 1. ຜົນງານໃນການຊີ້ນຳ-ນຳພາ ພາລະກິດປະຕິວັດຂອງປະທານ ໄກສອນ ພົມວິຫານ.

ເລີ່ມແຕ່ໄດ້ເຂົ້າຮ່ວມຂະບວນການປະຕິວັດ ປະທານໄກສອນ ພົມວິຫານ ໄດ້ຮັບຄວາມໄວ້ວາງໃຈ ແລະ ໄດ້ຮັບການມອບໝາຍໃຫ້ຮັບຜິດຊອບໜ້າທີ່ອັນສຳຄັນຍິ່ງດ້ວຍອາຍຸພຽງແຕ່ 35 ປີ, ໃນເງື່ອນໄຂທີ່ອິດທິກຳລັງຈັກກະພັດມີກຳລັງທາງດ້ານເສດຖະກິດ-ການເງິນ ທີ່ເຂັ້ມແຂງ, ພາຫະນະອາວຸດສົງຄາມທີ່ທັນສະໄໝ ໃນການເພີ່ມທະວີສົງຄາມຮຸກຮານປະເທດຂອງພວກເຮົາ ດ້ວຍຍຸດທະສາດອັນໃໝ່ນັ້ນ ເຊິ່ງເປັນພາລະອັນໜັກໜ່ວງທີ່ເພິ່ນຕ້ອງໄດ້ທຸ່ມເທທັງກຳລັງກາຍ, ຄວາມຮູ້ສະຕິປັນຍາຢ່າງສຸດຂີດ ແລະ ຕ້ອງມີຄວາມສາມາດປະດິດສ້າງສູງຈຶ່ງຈະປະຕິບັດໜ້າທີ່ ແລະ ຄວາມຮັບຜິດຊອບອັນໜັກໜ່ວງຂອງເພິ່ນ ເຊິ່ງໄດ້ຊີ້ໃຫ້ພວກເຮົາເຫັນແນວຄິດຊີ້ນຳຂອງປະທານ ໄກສອນ ພົມວິຫານ ທາງດ້ານທິດສະດີ ແລະ ພຶດຕິກຳ

ຕົວຈິງໃນແຕ່ລະຂົງເຂດວຽກງານຢ່າງເລິກເຊິ່ງ ແລະ ຮອບດ້ານສອດຄ່ອງກັບແຕ່ລະໄລຍະຂອງການປະຕິວັດແມ່ນເປັນຕົ້ນ:

- ແນວຄິດຊີ້ນໍາກ່ຽວກັບວຽກງານກໍ່ສ້າງກໍາລັງປະກອບອາວຸດ ຍາມໃດເພິ່ນກໍໄດ້ສຸມສະຕິປັນຍາເຂົ້າໃນການຄົ້ນຄວ້າວາງແນວທາງດ້ານການທະຫານ ດ້ວຍການດໍາເນີນສົງຄາມປະຊາຊົນ, ການສ້າງກໍາລັງປະກອບອາວຸດ, ສ້າງແນວຫຼັງ ແລະ ພື້ນຖານວຽກງານປ້ອງຊາດ-ປ້ອງກັນຄວາມສະຫງົບໃນທົ່ວປວງຊົນຮອບດ້ານ; ຊີ້ນໍາສົງຄາມ ແລະ ສິລະປະການທະຫານໃນການຕໍ່ສູ້ຕ້ານລັດທິລ່າເມືອງຂຶ້ນແບບເກົ່າ ແລະ ແບບໃໝ່; ແນວຄິດດ້ານການທະຫານດັ່ງກ່າວໄດ້ສ່ອງແສງໃຫ້ເຫັນເຖິງກົດເກນຂະຫຍາຍຕົວຂອງການຕໍ່ສູ້ປົດປ່ອຍຊາດ ໃນເງື່ອນໄຂຕົວຈິງຂອງປະເທດຊາດເຮົາ ແມ່ນການປະສານສົມທົບຢ່າງກົມກຽວ ລະຫວ່າງວິທະຍາສາດທີ່ເປັນມູນເຊື້ອການຕໍ່ສູ້ຂອງຊາດກັບສິ່ງຍອດຍິ່ງ ດ້ານການທະຫານແມ່ນປ້ອງກັນຊາດ, ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານ.

- ແນວຄິດຊີ້ນໍາຂອງປະທານ ໄກສອນ ພົມວິຫານ ກ່ຽວກັບວຽກງານກໍ່ສ້າງພັກໃຫ້ໜັກແໜ້ນເຂັ້ມແຂງ: ເພິ່ນໄດ້ຖືວຽກງານກໍ່ສ້າງພັກ ເປັນບັນຫາຕັດສິນທຸກໄຊຊະນະຂອງການປະຕິວັດ; ເພິ່ນໄດ້ໃຫ້ທັດສະນະວ່າ: ພັກເຮົາໃນຖານະເປັນພັກກໍາອໍານາດ ແມ່ນມີຄວາມຮັບຜິດຊອບໂດຍກົງຕໍ່ການຄົງຕົວ ແລະ ຂະຫຍາຍຕົວຂອງລະບອບໃໝ່ໃນປະເທດເຮົາ, ວຽກງານກໍ່ສ້າງພັກເປັນວຽກງານທີ່ມີຄວາມໝາຍສໍາຄັນ, ແມ່ນຄວາມຈໍາເປັນພາວະວິໄສທັງເປັນຍຸດທະສາດ, ສິ່ງດັ່ງກ່າວໄດ້ຊີ້ບອກວ່າ ພວກເຮົາຈໍາເປັນຕ້ອງເພີ່ມທະວີການກໍ່ສ້າງພັກໃຫ້ໜັກແໜ້ນ, ເຂັ້ມແຂງທາງດ້ານການເມືອງ, ແນວຄິດ ແລະ ການຈັດຕັ້ງ, ເຊີດຊູບົດບາດຂອງພັກໃຫ້ສົມເປັນແກນນໍາໃນລະບົບການເມືອງ.

- ປະທານ ໄກສອນ ພົມວິຫານ ໄດ້ເປັນເຈົ້າການຜັນຂະຫຍາຍແນວຄິດລິເລີ່ມປ່ຽນແປງໃໝ່ໃຫ້ເປັນອັນລະອຽດຈະແຈ້ງ ແລະ ເປັນລະບົບຄົບຊຸດຂຶ້ນເທື່ອລະກ້າວ ເຊິ່ງເພິ່ນໄດ້ເນັ້ນໜັກສະເໜີວ່າ ກ່ອນອື່ນໝົດຕ້ອງປ່ຽນແປງໃໝ່ດ້ານຈິນຕະນາການ ແລະ ຄວາມຮັບຮູ້ເພາະວ່າຖ້າຮັກສາຈິນຕະນາການເກົ່າ ແລະ ຄວາມຮູ້ເກົ່າໄວ້ການປ່ຽນແປງໃໝ່ກໍ່ຈະເກີດຂຶ້ນບໍ່ໄດ້; ການປ່ຽນແປງໃໝ່ແມ່ນສິ່ງທີ່ຕ້ອງເປັນໄປໂດຍຖືເປັນມາດຕະການຍຸດທະສາດອັນໜຶ່ງແຫ່ງການບູລະນະແນວທາງ ເພື່ອກ້າວຂຶ້ນສູ່ສັງຄົມນິຍົມ ດ້ວຍບາດກ້າວອັນໜັກແໜ້ນມີໄຊ. ຄວາມເປັນເຈົ້າການລິເລີ່ມການປ່ຽນແປງໃໝ່ຂອງປະທານ ໄກສອນ ພົມວິຫານ ບໍ່ໄດ້ເກີດຂຶ້ນໂດຍບັງເອີນ, ແຕ່ຫາກເກີດຂຶ້ນບົນພື້ນຖານການຄົ້ນຄວ້າຢ່າງເລິກເຊິ່ງກ່ຽວກັບນະໂຍບາຍໃໝ່ທາງດ້ານເສດຖະກິດ (NEP) ຂອງທ່ານເລນິນ, ຈາກຄວາມຮັບຮູ້ອັນເລິກເຊິ່ງ ເພິ່ນຈຶ່ງມີຄວາມກ້າຫານ, ປະດິດສ້າງໃນການໝູນໃຊ້ເຂົ້າກັບເງື່ອນໄຂ ແລະ ສະພາບຈຸດພິເສດຂອງປະເທດເຮົາ, ໃນຂະບວນວິວັດແຫ່ງການປ່ຽນແປງໃໝ່ ດ້ານຈິນຕະນາການເສດຖະກິດນັ້ນ ພັກເຮົາຖືເອົານະໂຍບາຍໃໝ່ທາງດ້ານເສດຖະກິດ (NEP) ຂອງເລນິນເປັນແຫຼ່ງທິດສະດີ ແລະ ບົດຮຽນພຶດຕິກໍາ ອັນອຸດົມສົມບູນ ແລະ ປະເສີດທີ່ສຸດສໍາລັບເບື້ອງທາງກ້າວເດີນຂອງພວກເຮົາໃນພາລະກິດປ່ຽນແປງໃໝ່.

ເພື່ອເຮັດໃຫ້ແນວທາງປ່ຽນແປງໃໝ່ ດໍາເນີນໄປຢ່າງຖືກຕ້ອງຕາມທິດທາງ ແລະ ຈຸດໝາຍທີ່ວາງໄວ້ທັງຮັບປະກັນສະຖຽນລະພາບ ແລະ ຄວາມໝັ້ນຄົງຂອງລະບອບປະຊາທິປະໄຕ ປະຊາຊົນ ພັກເຮົາກໍຄືປະທານໄກສອນ ພົມວິຫານ ໄດ້ກໍານົດ 6 ຫຼັກການພື້ນຖານຂອງການປະຕິວັດໃນໄລຍະໃໝ່ຄື:

① ຢຶດໝັ້ນຈຸດໝາຍສັງຄົມນິຍົມກໍຄື ການກໍ່ສ້າງຂະຫຍາຍ ແລະ ບູລະນະລະບອບປະຊາທິປະໄຕປະຊາຊົນ.

② ເອົາລັດທິມາກ-ເລນິນ ເປັນພື້ນຖານແນວຄິດຂອງພັກ ແລະ ເປັນເຂັມທິດຊີ້ນໍາພາລະກິດປະຕິວັດ.

③ ຢຶດໝັ້ນການນໍາພາຂອງພັກປະຊາຊົນປະຕິວັດລາວ.

④ ເສີມຂະຫຍາຍປະຊາທິປະໄຕ ບົນພື້ນຖານຫຼັກການລວມສູນປະຊາທິປະໄຕ, ເອົາປະຊາຊົນເປັນກົກພາຍໃຕ້ການນຳພາຂອງພັກ.

⑤ ເພີ່ມກຳລັງແຮງ ແລະ ຄວາມສັກສິດໃຫ້ແກ່ລະບົບອຳນາດປະຊາທິປະໄຕປະຊາຊົນ.

⑥ ສົມທົບລັດທິຮັກຊາດກັບລັດທິສາກົນກຳມະຊີບ ແລະ ສາກົນສັງຄົມນິຍົມ; ສົມທົບກຳລັງແຮງຂອງຊາດກັບກຳລັງສັງລວມຂອງຍຸກສະໄໝ. ການປ່ຽນແປງໃໝ່ຢູ່ປະເທດເຮົາ ດຳເນີນໄປພາຍໃຕ້ການຊີ້ນຳ-ນຳພາຂອງ ປະທານ ໄກສອນ ພົມວິຫານ ແມ່ນມີລັກສະນະຮອບດ້ານ ແລະ ມີຫຼັກການ.

ພ້ອມກັນນັ້ນ ປະທານ ໄກສອນ ພົມວິຫານ ຍັງໄດ້ເນັ້ນເຖິງຂໍ້ດວກອັນມີຄວາມສ□າຄັນ ທີ່ມີຄວາມໝາຍຕັດສິນຕໍ່ໄຊຊະນະ ຂອງພາລະກິດປະຕິວັດໃນໄລຍະໃໝ່ຄື:

1. ເສີມຂະຫຍາຍມູນເຊື້ອຮັກຊາດ ຂອງປະຊາຊົນບັນດາເຜົ່າຕ່າງໆ ຢ່າງບໍ່ຢຸດຢັ້ງ, ຢຶດໝັ້ນຈຸດໝາຍປະຕິວັດຄື: ປັບປຸງ, ຂະຫຍາຍ ແລະ ບູລະນະລະບອບປະຊາທິປະໄຕ ປະຊາຊົນ ຂ້າມຜ່ານຂຶ້ນສູ່ສັງຄົມນິຍົມເທື່ອລະກ້າວ.
2. ເພີ່ມທະວີຄວາມສາມັກຄີ, ປອງດອງ, ອີງໃສ່ປະຊາຊົນຢ່າງໜັກແໜ້ນຂະຫຍາຍປະຊາທິປະໄຕ ຢ່າງກວ້າງຂວາງ.
3. ຕັດສິນໃຈ ດຳເນີນການປ່ຽນແປງໃໝ່ຢ່າງຮອບດ້ານ, ມີຫຼັກການດ້ວຍບາດກ້າວອັນ ເໝາະສົມ ພາຍໃຕ້ການນຳພາຂອງພັກ.
4. ເປີດກວ້າງ ເພີ່ມທະວີຄວາມສາມັກຄີ ແລະ ການຮ່ວມມືສາກົນຢ່າງບໍ່ຢຸດຢັ້ງ, ຍາດແຍ່ງເອົາການສະໜັບສະໜູນຢ່າງກວ້າງຂວາງ ໃຫ້ແກ່ພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດຂອງພວກເຮົາ.

ປະທານ ໄກສອນ ພົມວິຫານ ໃນຖານະຜູ້ນຳພາລິເລີ່ມການປ່ຽນແປງໃໝ່ເວລາໃດກໍຮັບຮູ້ແຈ້ງວ່າການເຮັດໃຫ້ປະເທດຊາດຫຼຸດພົ້ນອອກຈາກສະພາວະດ້ອຍພັດທະນາຫຼ້າຫຼັງນັ້ນ ມັນມີຄວາມຈຳເປັນຢ່າງຍິ່ງທີ່ຕ້ອງເປີດກວ້າງການພົວພັນກັບຕ່າງປະເທດ, ເອົາເສດຖະກິດຂອງປະເທດເຮົາເຊື່ອມຕິດ ກັບເສດຖະກິດຂອງບັນດາປະເທດ ໃນພາກພື້ນ ແລະ ໃນໂລກ.

ປະທານ ໄກສອນ ພົມວິຫານ ບໍ່ພຽງເປັນຜູ້ຊີ້ນຳການເປີດກວ້າງການພົວພັນກັບຕ່າງປະເທດເທົ່ານັ້ນ, ຫາກຍັງເປັນຜູ້ທີ່ເຄື່ອນໄຫວດ້ານການຕ່າງປະເທດຢ່າງເອົາການເອົາງານ ເຊິ່ງເວລາໃດກໍເປັນແບບຢ່າງດ້ານການກຳແໜ້ນຫຼັກການ ແລະ ຍຸດທະສາດທີ່ວ່າງອອກ; ພ້ອມກັນນັ້ນ ກໍມີຄວາມຄ່ອງແຄ້ວນິ້ມນວນໃນດ້ານຍຸດໂທບາຍເພື່ອບັນລຸຈຸດປະສົງເປົ້າໝາຍທີ່ວາງໄວ້. ປະທານໄກສອນ ພົມວິຫານ ໄດ້ເນັ້ນໜັກວ່າພວກເຮົາ ຕ້ອງສົມທົບຢ່າງກົມກຽວລະຫວ່າງການເຄື່ອນໄຫວ ດ້ານການເມືອງ-ການທູດກັບເສດຖະກິດເພື່ອຍາດແຍ່ງເອົາທຶນຮອນ, ບົດຮຽນ ແລະ ວິທະຍາສາດ-ເຕັກນິກມາຮັບໃຊ້ພາລະກິດປ່ຽນແປງໃໝ່. ຢາເປີດກວ້າງການພົວພັນກັບຕ່າງປະເທດໄດ້ຮັບຜົນດີ ກ່ອນອື່ນໝົດຕ້ອງສ້າງກຳລັງພວກເຮົາໃຫ້ເຂັ້ມແຂງຮອບດ້ານຄື: ດ້ານການເມືອງຕ້ອງເຮັດໃຫ້ປະຊາຊົນຕ້ອງຕິດພັນ ແລະ ເຊື່ອໝັ້ນລະບອບໃໝ່; ດ້ານເສດຖະກິດຕ້ອງຂະຫຍາຍການຜະລິດທຸລະກິດຢ່າງແຂງແຮງ ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນດີຂຶ້ນເລື້ອຍໆ; ດ້ານສັງຄົມຕ້ອງມີຄວາມປອດໃສຍຸຕິທຳ; ດ້ານປ້ອງກັນຊາດ-ປ້ອງການຄວາມສະຫງົບຕ້ອງຕິດແໜ້ນ ແລະ ຮັບໃຊ້ການພົວພັນເສດຖະກິດກັບຕ່າງປະເທດ. ການປ່ຽນແປງໃໝ່ຢູ່ປະເທດເຮົາພາຍໃຕ້ການລິເລີ່ມ ແລະ ການນຳພາ-ຊີ້ນຳຂອງປະທານ ໄກສອນ ພົມວິຫານ ໄດ້ກາຍເປັນພາລະກິດຂອງທົ່ວພັກ ແລະ ທົ່ວປວງຊົນເຮົາ ທັງໄດ້ຮັບການສະໜັບສະໜູນຊ່ວຍເຫຼືອຈາກສາກົນນັບມື້ນັບເພີ່ມຂຶ້ນ, ມັນໄດ້ກາຍເປັນຂະບວນວິວັດທີ່ບໍ່ຕ່າວປີ້ນໄດ້.

**2. ຄຸນງາມຄວາມດີຂອງປະທານໄກສອນ ພົມວິຫານ**

ຄຸນງາມຄວາມດີຂອງປະທານ ໄກສອນ ພົມວິຫານ ແມ່ນໃຫຍ່ຫຼວງທີ່ສຸດ ໃນການນໍາພາພາລະກິດຕໍ່ສູ້ປົດປ່ອຍຊາດ, ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ. ປະທານໄກສອນ ພົມວິຫານ ໄດ້ກາຍເປັນຕົວແທນລວມຍອດແຫ່ງຄວາມຮັກຊາດ ແລະ ເປັນສັນຍາລັກແຫ່ງຊາດລາວວິລະຊົນ, ຄົນລາວພິລະອາດຫານ, ປະທານເປັນນັກການເມືອງທີ່ສະຫຼາດສ່ອງໃສ ເປັນນາຍທະຫານທີ່ປີຊາສາມາດ. ເປັນນັກທິດສະດີແນວຄິດທີ່ຍິ່ງໃຫຍ່ຂອງຊາດລາວພວກເຮົາ ເປັນນັກໂຄສະນາ-ປາຖະກະຖາທີ່ຊໍານານ, ເພິ່ນເປັນຜູ້ກໍາແໜ້ນຫຼັກມູນພື້ນຖານຂອງສັດຈະວິພາກມາກ-ເລນິນ, ກໍາສະພາບຄວາມເປັນຈິງຂອງປະເທດຊາດ ແລະປະຊາຊົນລາວບັນດາເຜົ່າ, ເປັນຜູ້ເຜີຍແຜ່ທິດສະດີປະຕິວັດ. ປະທານໄກສອນ ພົມວິຫານ ໄດ້ເອົາໃຈໃສ່ໃນການຄົ້ນຄວ້າແນວທາງແຜນນະໂຍບາຍຂອງພັກ, ນະໂຍບາຍຂອງລັດ ແລະ ໄດ້ຊີ້ນໍາ-ນໍາພາຢ່າງໃກ້ຊິດໃນແຕ່ລະຂົງເຂດວຽກງານຢ່າງຮອບດ້ານຄື ຂົງເຂດເສດຖະກິດ, ການເມືອງ, ການສຶກສາ, ວັດທະນະທໍາ, ສາທາລະນະສຸກ, ວຽກງານກໍ່ສ້າງຮາກຖານການເມືອງ, ການພັດທະນາຊົນນະບົດ, ວຽກງານແນວໂຮມ, ອົງການຈັດຕັ້ງມະຫາຊົນວຽກງານຕ່າງປະເທດ ແລະ ອື່ນໆ.

ປະທານ ໄກສອນ ພົມວິຫານ ໄດ້ຕິດພັນຢ່າງສະໜິດແໜ້ນກັບການເຕີບໃຫຍ່ຂະຫຍາຍຕົວຂອງພັກ ແລະ ການປະຕິວັດຢູ່ປະເທດເຮົາ, ເພິ່ນໄດ້ອຸທິດຕະຫຼອດຊີວິດຂອງຕົນໃຫ້ແກ່ການປະຕິວັດປະເທດເຮົາ.

ຕະຫຼອດໄລຍະແຫ່ງການເປັນຜູ້ນໍາສູງສຸດຂອງພັກ ແລະ ລັດເຮົາ, ປະທານ ໄກສອນ ພົມວິຫານ ຍາມໃດກໍຊີ້ທິດເບື້ອງທາງແຫ່ງການກ້າວເດີນໄປສູ່ໄຊຊະນະຂອງການປະຕິວັດລາວ, ທັງເປັນແບບຢ່າງອັນໃສແຈ້ງທາງດ້ານຄຸນທາດການເມືອງ, ຄຸນສົມບັດສິນທໍາປະຕິວັດ, ແບບແຜນທີ່ເຮັດວຽກກໍຄືແບບແຜນການດໍາລົງຊີວິດໃຫ້ແກ່ພະນັກງານ, ສະມາຊິກພັກ, ນັກຮົບ ແລະ ປະຊາຊົນບັນດາເຜົ່າ.

ຄຸນສົມບັດອັນດີເລີດຂອງປະທານ ໄກສອນ ພົມວິຫານ ແມ່ນນໍ້າໃຈປະຕິວັດເຖິງຖອງ, ສຸດກົກສຸດປາຍ, ຍອມເສຍສະຫຼະຜົນປະໂຫຍດສ່ວນຕົວເພື່ອປະເທດຊາດ ແລະ ປະຊາຊົນ ດ້ວຍຄວາມຊື່ສັດບໍລິສຸດ ແລະ ຈົງຮັກພັກດີ, ເພິ່ນເປັນຜູ້ນໍາທີ່ເດັດຂາດ ແລະ ມີຫົວຄິດປະດິດສ້າງ, ກ້າຄິດ, ກ້າເຮັດ, ກ້າຮັບຜິດຊອບ; ເພິ່ນເປັນຜູ້ນໍາທີ່ເປັນຄັນທຸງແຫ່ງການເຕົ້າໂຮມຄວາມສາມັກຄີທົ່ວປວງຊົນບັນດາເຜົ່າ; ເພິ່ນໄດ້ເປັນແວ່ນແຍງໃນການເຕົ້າໂຮມຄວາມສາມັກຄີປະຊາຊົນບັນດາເຜົ່າ, ຍາມໃດກໍຖືສໍາຄັນ ແລະ ເອົາໃຈໃສ່ໃນການສ້າງຄວາມສາມັກຄີຮັກແພງ, ຄວາມໄວ້ເນື້ອເຊື່ອໃຈ ແລະ ນັບຖື ຈາກມະຫາຊົນ.

ໃນວິທີເຮັດວຽກຂອງປະທານ ໄກສອນ ພົມວິຫານ ໂດຍໄດ້ຖືສໍາຄັນ ແລະ ປະຕິບັດຢ່າງເຂັ້ມງວດໃນສາມປະການຄື: ການຊີ້ນໍາ-ນໍາພາຂອງເພິ່ນບໍ່ວ່າເວລາໃດກໍເປັນໝູ່ຄະນະ, ໃກ້ຊິດຕິດແທດກັບມະຫາຊົນ, ອີງໃສ່ບົດຮຽນ ແລະ ຫົວຄິດປະດິດສ້າງຂອງມະຫາຊົນ.

**III. ເສີມຂະຫຍາຍ ແລະ ສືບທອດມໍລະດົກອັນລໍ້າຄ່າຂອງປະທານ ໄກສອນ ພົມວິຫານ ທີ່ໄດ້ສ້າງໄວ້.**

ເພື່ອສືບຕໍ່ເພີ່ມພູນຄູນສ້າງ ແລະ ຂະຫຍາຍອຸດົມການ ແລະ ມູນມໍລະດົກອັນລໍ້າຄ່າຂອງປະທານ ໄກສອນ ພົມວິຫານ ຢ່າງບໍ່ຢຸດຢັ້ງ ທົ່ວພັກ, ທົ່ວກໍາລັງປະກອບອາວຸດ ແລະ ທົ່ວປວງຊົນລາວບັນດາເຜົ່າ ຕ້ອງພ້ອມກັນຈັດຕັ້ງປະຕິບັດບາງຈຸດສໍາຄັນດັ່ງນີ້:

**1.** ສືບຕໍ່ປັບປຸງປົວແປງພາຍໃນພັກໃຫ້ເລິກເຊິ່ງ, ໜັກແໜ້ນໃນທຸກດ້ານ ຕິດພັນກັບການເສີມຂະຫຍາຍປະຊາທິປະໄຕພາຍໃນພັກ ເພື່ອກຽມໃຫ້ແກ່ການດໍາເນີນກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ໃຫ້ມີຜົນສໍາເລັດອັນຈົບງາມ; ເພີ່ມທະວີວຽກງານກໍ່ສ້າງ ແລະ ປັບປຸງພັກ ໃຫ້ມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ, ເຊີດຊູບົດບາດພັກ ເປັນແກນນໍາໃນລະບົບການເມືອງປະຊາທິປະໄຕ ປະຊາຊົນ.

**2.** ຄະນະພັກ - ຄະນະນໍາແຕ່ລະຂັ້ນ ຕ້ອງເພີ່ມທະວີຄວາມເປັນເຈົ້າການ ແລະ ຄວາມຮັບຜິດຊອບສູງຕໍ່ການໝູນໃຊ້ບົດຮຽນການນໍາພາຂອງພັກເຮົາກໍຄືແບບຢ່າງໃນການຊີ້ນໍາ - ນໍາພາຂອງປະທານ ໄກສອນ

ພົມວິຫານ ໃນເງື່ອນໄຂໃໝ່ແຫ່ງການນຳໃຊ້ກົນໄກເສດຖະກິດຕະຫຼາດ ແລະ ເປີດກວ້າງການພົວພັນຮ່ວມມື ແລະ ເຊື່ອມໂຍງກັບພາກພື້ນ ແລະ ສາກົນ; ປະຕິບັດແນວທາງ ແລະ ມະຕິ ຕ່າງໆຂອງພັກ ດ້ວຍຄວາມເດັດດ່ຽວໜຽວແໜ້ນ; ມີສະຕິລະວັງຕົວຕໍ່ກົນອຸບາຍຫັນປ່ຽນໂດຍສັນຕິ ຂອງບັນດາອິດທິກຳລັງປໍລະປັກ ແລະ ພວກຄົນບໍ່ດີ; ເພີ່ມຄວາມເຂັ້ມງວດໃນການກຳຈັດແກ້ໄຂປະກົດການຫຍໍ້ທໍ້ຕ່າງໆພາຍໃນພັກ, ໃນກົງຈັກຂອງລັດ ແລະ ໃນສັງຄົມໃຫ້ໄດ້ເປັນກ້າວໆ.

**3.** ເພີ່ມຄວາມເອົາໃຈໃສ່ຕໍ່ການຮັບປະກັນສະຖຽນລະພາບການເມືອງ ແລະ ຄວາມສະຫງົບປອດໄພໃນສັງ ຄົມ, ສ້າງສະພາບແວດລ້ອມອັນອຳນວຍສຳລັບການສ້າງສາພັດທະນາປະເທດຊາດ; ປະຕິບັດແນວທາງປ້ອງກັນຊາດ, ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານຢ່າງຕັ້ງໜ້າ; ປຸກລະດົມຂົນຂວາຍປະຊາຊົນເຂົ້າຮ່ວມໃນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ດ້ວຍການສ້າງທ່າສະໜາມສົງຄາມປະຊາຊົນ, ກໍ່ສ້າງຮາກຖານການເມືອງທຸກປະເພດໃຫ້ເຂັ້ມແຂງ, ໝັກແໜ້ນຮັບປະກັນສະຖຽນລະພາບ ແລະ ຄວາມສະຫງົບໃນຂອບເຂດທົ່ວປະເທດດ້ວຍຄວາມໝັກແໜ້ນ.

**4.** ສືບຕໍ່ພັດທະນາເສດຖະກິດ-ສັງຄົມ ໃຫ້ຂະຫຍາຍຕົວຕໍ່ເນື່ອງ ແລະ ສືບຕໍ່ເສີມຂະຫຍາຍຈິນຕະນາການ ແລະ ແຜນນະໂຍບາຍໃໝ່ທາງດ້ານເສດຖະກິດທີ່ ປະທານ ໄກສອນ ພົມວິຫານ ໄດ້ວາງອອກໃນແນວທາງປ່ຽນແປງໃໝ່ຂອງພັກເຮົາ; ຢຶດໝັ້ນໃນ 6 ຫຼັກການຂອງການປ່ຽນແປງໃໝ່ຂອງພັກ.

**5.** ສືບຕໍ່ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນໃຫ້ເຂົ້າສູ່ລວງເລິກ ແລະ ທົ່ວເຖິງຕາມທິດ 3 ສ້າງດ້ວຍການປຸກລະດົມກຳລັງແຮງສັງລວມຂອງທົ່ວສັງຄົມເຂົ້າໃນວຽກງານດັ່ງກ່າວຢ່າງເປັນເຈົ້າການ ເພື່ອເຮັດໃຫ້ປະເທດຊາດຫຼຸດພົ້ນອອກຈາກຄວາມດ້ອຍພັດທະນາ ຕາມທິດທີ່ພັກເຮົາໄດ້ກຳນົດໄວ້.

**6.** ສືບຕໍ່ບູລະນະ ແລະ ກໍ່ສ້າງລັດປະຊາທິປະໄຕປະຊາຊົນ ໃຫ້ກາຍເປັນລັດແຫ່ງກົດໝາຍ, ເປັນລັດຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອປະຊາຊົນຕາມທີ່ ປະທານ ໄກສອນ ພົມວິຫານ ໄດ້ວາງພື້ນຖານໄວ້ແລ້ວນັ້ນ, ທັງສ້າງເງື່ອນໄຂໃຫ້ປະຊາຊົນພົນລະເມືອງປະຕິບັດສິດເປັນເຈົ້າປະເທດຊາດ ແລະ ປະກອບສ່ວນເຂົ້າໃນການປັບປຸງອົງ ການປົກຄອງຂັ້ນຕ່າງໆ.

**7.** ສືບຕໍ່ປະຕິບັດແນວທາງການຕ່າງປະເທດຂອງພັກສັນຕິພາບ, ເອກະລາດ, ມິດຕະພາບ ແລະ ການຮ່ວມມືຢ່າງສະເໝີຕົ້ນສະເໝີປາຍ, ເປັນເຈົ້າການເຊື່ອມໂຍງກັບບັນດາປະເທດໃນພາກພື້ນ ແລະ ສາກົນ ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການສ້າງປະຊາຄົມອາຊຽນທັງຮັບປະກັນຕາມທິດນຳເພີ່ມມິດຜ່ອນສັດຕູ, ທັງຕໍ່ສູ້ທັງຍາດແຍ່ງ; ເພີ່ມທະວີສາຍພົວພັນມິດຕະພາບ ແລະ ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານກັບພັກ, ລັດ ແລະ ປະຊາຊົນຫວຽດນາມ; ເພີ່ມທະວີການພົວພັນກັບ ສປ ຈີນ ຕາມທິດໝັ້ນຄົງຍາວນານ, ບ້ານໃກ້ເຮືອນຄຽງທີ່ດີ, ໄວ້ເນື້ອເຊື່ອໃຈກັນ, ຮ່ວມມືຮອບດ້ານ, ເປັນຄູ່ຮ່ວມຊາຕາກຳທີ່ດີມີຄວາມໝາຍຍຸດທະສາດ.

**8.** ຄົ້ນຄວ້າຮ□າຮຽນເອົາແນວຄິດຂອງປະທານ ໄກສອນ ພົມວິຫານ, ແບບຢ່າງອັນດີງາມ ແລະ ຄຸນສົມບັດສິນທຳປະຕິວັດ ຂອງປະທານ ໄກສອນ ພົມວິຫານ ແລະ ຕື່ນຕົວປະຕິບັດຢ່າງເປັນເຈົ້າການ, ນັ້ນແມ່ນການຢຶດໝັ້ນອຸດົມການໃນຈຸດໝາຍສັງຄົມນິຍົມ; ມີມານະຈິດປະຕິວັດອັນເດັດດ່ຽວໜຽວແໜ້ນ ແລະ ສຸດກົກສຸດປາຍ; ມີທັດສະນະຫຼັກໝັ້ນອັນໝັກແໜ້ນ, ມີນໍ້າໃຈຮັກຊາດອັນດູດດື່ມ, ມີຄວາມເສຍສະຫຼະ ແລະ ອຸທິດຕົນຢ່າງບໍ່ມີຂອບເຂດເພື່ອຊາດ ເພື່ອປະຊາຊົນ, ມີຄວາມສະຫຼຸ້ງໄວ, ທັງມີຄວາມກ້າຫານ ແລະ ມີຫົວຄິດປະດິດສ້າງໃນການໝູນໃຊ້ທິດສະດີ ແລະ ບົດຮຽນຂອງຕ່າງປະເທດເຂົ້າກັບເງື່ອນໄຂຕົວຈິງຂອງປະເທດເຮົາ.

ມູນເຊື້ອປະຕິວັດ, ຄຸນທາດການເມືອງ, ຄຸນສົມບັດສິນທຳ, ແບບແຜນວິທີເຮັດວຽກ ແລະ ການດຳລົງຊີວິດຂອງປະທານ ໄກສອນ ພົມວິຫານ ໄດ້ເປັນແວ່ນແຍງອັນໃສແຈ້ງໃຫ້ແກ່ພະນັກງານ, ສະມາຊິກພັກ,

ນັກຮົບ ແລະ ພົນລະເມືອງລາວທຸກໆຄົນ. ພວກເຮົາຈົ່ງຮ່ຳຮຽນເອົາແບບແຜນການເຄື່ອນໄຫວນຳພາ ແລະ ການດຳລົງຊີວິດຂອງ ປະທານ ໄກສອນ ພົມວິຫານ ນຳໄປປະຕິບັດ, ຖືອັນນັ້ນເປັນໄມ້ຫຼາວັດແທກດ້ານຄຸນສົມບັດ, ທັດສະນະທ່າທີຂອງພະນັກງານ ທັງເປັນການເພີ່ມພູນຄູນສ້າງມູນເຊື້ອອັນຈົບງາມຂອງບັນພະບູລຸດ ກໍ່ຄື ປະທານ ໄກສອນ ພົມວິຫານ ຜູ້ນຳທີ່ແສນເຄົາລົບຮັກຂອງປວງຊົນລາວທັງຊາດ.

**ພາລະກິດຂອງປະທານ ໄກສອນ ພົມວິຫານ**
**ຍືນຍົງຢູ່ກັບພວກເຮົາຕະຫຼອດໄປ!**